**ມິຊຊາອາທິດທີ 15 ການົດທຳມະດາ ປີ B**

**ວັນທີ 11 ກໍລະກົດ 2021**



**ພຣະວໍລະສານໂດຍນັກບຸນມັກໂກ 6, 7-13**

ໃນເວລານັ້ນ, ພຣະເຢຊູເຈົ້າໄດ້ຊົງຮຽກພວກສາວົກສິບສອງອົງແລ້ວສົ່ງພວກເຂົາໄປເປັນຄູ່ໆ.ພຣະອົງປະທານໃຫ້ພວກເຂົາມີອຳນາດຄວບຄຸມຈິດຊົ່ວຮ້າຍຕ່າງໆພ້ອມທັງສັ່ງບໍ່ໃຫ້ຖືຫຍັງໄປນຳທາງ, ເວັ້ນແຕ່ໄມ້ຄ້ອນເທົ້າເທົ່ານັ້ນ, ບໍ່ໃຫ້ຖືເຂົ້າຈີ່ ບໍ່ໃຫ້ຖືຖົງຍ່າມ ຫລືເງິນເໜັບແອວກໍຕາມ , ໃຫ້ຖືແຕ່ເກີບແລະບໍ່ໃຫ້ມີເສື້ອສຳລັບຖ່າຍໄປນຳ.

ພຣະອົງກ່າວກັບພວກເຂົາວ່າ: “ເມື່ອເຮືອນໃດຕ້ອນຮັບພວກເຈົ້າ, ກໍໃຫ້ພັກເຊົາຢູ່ເຮືອນນັ້ນຈົນກ່ວາຈະອອກເດີນທາງໄປ. ຖ້າບ່ອນໃດເຂົາບໍ່ຕ້ອນຮັບ ແລະບໍ່ຍອມຟັງພວກເຈົ້າ, ກໍໃຫ້ໜີອອກຈາກທີ່ນັ້ນດ້ວຍສັ່ນຂີ້ຝຸ່ນທີ່ຕິດຕີນພວກເຈົ້າເສຍ ສະແດງຄວາມບໍ່ພໍໃຈຕໍ່ພວກເຂົາ”.

ພວກສາວົກກໍອອກເດີນທາງໄປປ່າວປະກາດການເປັນທຸກກັບໃຈ, ພວກເຂົາໄດ້ຂັບໄລ່ຜີປີສາດມາກມາຍ ແລະປິ່ນປົວຄົນເຈັບໄຂ້ຢ່າງຫລວງຫລາຍດ້ວຍການທານ້ຳມັນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 6, 7-13**

ເມື່ອຟັງວາຈາພຣະເຈົ້າວັນອາທິດນີ້, ຖ້າພວກເຮົາມີຄວາມຈໍາດີກໍຈະເຫັນວ່າ ສິ່ງທີ່ພຣະເຢຊູເຈົ້າສັ່ງໃຫ້ພວກສາວົກກະທໍາບົນເສັ້ນທາງແຫ່ງການປະກາດອານາຈັກສະຫວັນຕາມບ້ານຕາມເຮືອນຕ່າງໆນັ້ນລ້ວນແຕ່ເປັນສິ່ງທີ່ພຣະເຢຊູເຈົ້າເອງໄດ້ກະທໍາມາກ່ອນແລ້ວ. ເຊັ່ນອາທິດແລ້ວນີ້, ພຣະເຢຊູເຈົ້າໄດ້ກັບໄປບ້ານເກີດເມືອງນອນຂອງພຣະອົງທີ່ນາຊາແລັດ ພໍດີຖືກວັນຊາບາໂຕ, ພຣະອົງກໍໄດ້ເທດສະໜາສັ່ງສອນໃນໂຮງທັມ. ແລະຜົນທີ່ໄດ້ຮັບກໍຄື ໄທບ້ານຂອງພຣະອົງບໍ່ເຊື່ອໃນຄໍາເທດສອນຂອງພຣະອົງ.

ວັນນີ້, ພຣະເຢຊູເຈົ້າກໍສົ່ງພວກສາວົກຂອງພຣະອົງໄປເປັນຄູ່ໆ ເພື່ອສືບຕໍ່ພາລະກິດແຫ່ງການປະກາດອານາຈັກສະຫວັນ.ສິ່ງທີ່ໜ້າຄິດກໍຄື ພຣະເຢຊູເຈົ້າສັ່ງໃຫ້ພວກສາວົກຂອງພຣະອົງບໍ່ໃຫ້ຖືຫຍັງໄປນໍາ. ບໍ່ວ່າຈະເປັນສະບຽງເຂົ້າປາອາຫານ, ວັດຖຸເງິນຄໍາ, ແມ່ນກະທັ້ງເຄື່ອງນຸ່ງກໍບໍ່ໃຫ້ຖືໄປນໍາດ້ວຍ. ຍ້ອນຫຍັງ? ຖ້າພວກເຮົາມາລົມທຽບໃສ່ສະພາບສັງຄົມປັດຈຸບັນກໍຈະເຫັນວ່າເປັນໄປບໍ່ໄດ້. ເພາະທຸກສິ່ງຢ່າງແລະເປັນຕົ້ນການຄອງຊີບລ້ວນແຕ່ຕ້ອງໃຊ້ເງິນເພື່ອໃຊ້ຈ່າຍຊື້ສອຍ. ຖ້າພວກເຮົາບໍ່ຊອກຫາເຂົ້າປາອາຫານ, ເຄື່ອງນຸ່ງຂອງຖືທີ່ຈໍາເປັນແລ້ວ, ເຮັດແນວໃດພວກເຮົາຈຶ່ງສາມາດມີຊີວິດຢູ່ໄດ້? ແນ່ນອນການຄອງຊີບເປັນສິ່ງຈໍາເປັນ, ແຕ່ຖ້າພວກເຮົາມົວເມົາແຕ່ຊອກຫາວັດຖຸສິ່ງຂອງທີ່ເປັນຂອງໂລກແລ້ວ ເຮັດແນວໃດພວກເຮົາຈຶ່ງມີເວລາຄິດຫາສິ່ງທີ່ເປັນຂອງສະຫວັນຄືການປະກາດອານາຈັກຂອງພຣະເຈົ້າໄດ້? ພຣະເຢຊູເຈົ້າປາດຖະໜາໃຫ້ພວກສາວົກຊອກຫາອານາຈັກສະຫວັນກ່ອນ. ສ່ວນສິ່ງອື່ນໆນັ້ນພຣະບິດາເຈົ້າຈະປະທານໃຫ້ຫລາຍກວ່າສິ່ງທີ່ພວກເຂົາວອນຂໍອີກຊໍ້າ.ເທດຜົນທີສອງກໍຄືພຣະເຢຊູເຈົ້າຢາກໃຫ້ພວກລູກສິດບໍ່ຜູກພັນນໍາວັດຖຸສິ່ງຂອງຢູ່ໃນໂລກນີ້.ເໝືອນກັບພຣະອົງເອງ, ພຣະອົງໄດ້ຍອມສະລະທຸກຢ່າງເພື່ອຮັບເອົາສະພາບເປັນມະນຸດເໝືອນກັບພວກເຮົາ. ເພື່ອໃຫ້ພວກເຮົາໄດ້ຮູ້ເຖິງຄວາມຮັກຂອງພຣະບິດາເຈົ້າຜ່ານທາງຊີວິດແລະຄໍາເທດສອນຂອງພຣະອົງ.

ສ່ວນພວກເຮົາຜູ້ເປັນກຣິສຕັງເດ? ພວກເຮົາຜູ້ໄດ້ຖືກສົ່ງໄປເໝືອນດັ່ງພວກສາວົກເພື່ອເປັນພິຍານເຖິງພຣະເຢຊູເຈົ້າ. ເພື່ອປະກາດອານາຈັກຂອງພຣະອົງ, ພວກເຮົາໄດ້ສະລະທຸກຢ່າງເພື່ອວຽກງານນີ້ແລ້ວບໍ? ຫລືພວກເຮົາຍັງສົນລະວົນນໍາຊີວິດການເປັນຢູ່, ຄວາມຮັ່ງມີ, ຍົດຖາບັນດາສັກ ແລະພວກເຮົາລືມວຽກງານການປະກາດອານາຈັກຂອງພຣະອົງ?

**ພາວະນາ**

ໂອພຣະເຈົ້າ, ໂຜດໃຫ້ລູກຮູ້ຈັກຕິດໃຈນໍາແຕ່ສິ່ງຂອງສະຫວັນ. ເພື່ອລູກຈະໄດ້ເປັນພິຍານເຖິງຜູ້ທີ່ສົ່ງລູກໄປຄືອົງພຣະເຢຊູກຣິສໂຕເຈົ້າ, ຜູ້ໄດ້ຍອມສະລະທຸກຢ່າງ ແມ່ນກະທັ້ງຊີວິດຂອງພຣະອົງເພື່ອຄວາມລອດຂອງລູກແລະມວນມະນຸດ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ